DEPARTMENT OF HEALTH

# ສິ່ງທີ່ຄາດຫວັງ: ເຂົ້າເບິ່ງສຳເນົາຂອງສະຖານທີ່ກວດນໍ້າລາຍຫາໂຄວິດ-19

ສິ່ງທີ່ທ່ານຄາດຫວັງເມື່ອທ່ານເຂົ້າໄປສະຖານທີ່ກວດນໍ້າລາຍຫາໂຄວິດ-19.

ສິ່ງທໍາອິດ, ຕ້ອງໃຫ້ແນ່ໃຈວ່າບໍ່ໄດ້ກິນ, ດື່ມນໍ້າ, ສູບຢາ, ຫຼື ຫຍໍ້າສິ່ງໃດໆເປັນເວລາ 30 ນາທີ ກ່ອນທີ່ທ່ານຈະເຂົ້າໄປຮັບການກວດຕົວຢ່າງນໍ້າລາຍ.

ນີ້ລວມເຖິງຫ້າມດື່ມນໍ້າ.

ຖ້າທ່ານມີສິ່ງເຫຼົ່ານີ້, ໃຫ້ນໍາເອົາໂທລະສັບສະມາດໂຟນ, ບັດປະກັນໄພສຸຂະພາບ, ແລະທີ່ຢູ່ອີເມວທີ່ສາມາດຕິດຕໍ່ໄດ້ໄປພ້ອມ.

ຖ້າທ່ານບໍ່ມີໂທລະສັບສະມາດໂຟນ, ມີແທັບເລັດທີ່ສະອາດທີ່ສາມາດນໍາໃຊ້ໄດ້ຢູ່ສູນໄວ້ໃຫ້ບໍລິການ.

ຖ້າທ່ານບໍ່ມີປະກັນໄພ, ທ່ານສາມາດເຂົ້າກວດຫາເຊື້ອໂຄວິດໂດຍບໍ່ເສຍເງິນ.

ທ່ານຈະບໍ່ໄດ້ຮັບບິນເກັບເງິນ.

ແລະ ຖ້າວ່າທ່ານບໍ່ມີທີ່ຢູ່ອີເມວທີ່ສາມາດຕິດຕໍ່ໄດ້, ພະນັກງານສາມາດໃຊ້ເບີໂທລະສັບຕິດຕໍ່ໄປ ແລະ ບອກຜົນກວດຜ່ານທາງໂທລະສັບໃຫ້ທ່ານຮັບຊາບ.

ທ່ານໄດ້ຖືກແນະນໍາໃຫ້ສະໝັກເພື່ອນັດໝາຍເວລາ, ແຕ່ການເຂົ້າໄປກວດໂດຍບໍ່ໄດ້ນັດໝາຍກໍ່ຍິນດີຕ້ອນຮັບຄືກັນ.

ເມື່ອທ່ານມາຮອດ, ໃຫ້ປະຕິບັດຕາມຄໍາແນະນໍາຕາມປ້າຍລົງທະບຽນ ຫຼື ເຂົ້າມາລົງທະບຽນຕາມການນັດໝາຍຂອງທ່ານ.

ພະນັກງານຈະບອກໃຫ້ທ່ານປ່ຽນຜ້າອັດດັງອັນໃໝ່ທີ່ເປັນແບບທີ່ນໍາໃຊ້ໃນຫ້ອງຜ່າຕັດ.

ສິ່ງນີ້ສາມາດຊ່ວຍໃຫ້ສະຖານທີ່ສະອາດເທົ່າທີ່ຈະເປັນໄປໄດ້.

ພະນັກງານຈະຖາມວ່າທ່ານຕ້ອງການນາຍແປພາສາ ແລະ ຖ້າທ່ານມີໂທລະສັບສະມາດໂຟນ.

ຫຼັງຈາກນັ້ນພວກເຂົາຈະເອົາອຸປະກອນ ແລະ ແທັບເລັດໃຫ້ກັບທ່ານ.

ທ່ານຈະສາມາດໃຊ້ໂທລະສັບສະມາດໂຟນໃນການສະແກນລະຫັດຄິວອາໂຄດ (QR code) ໃນແທັບເລັດ.

ນີ້ຈະເຮັດໃຫ້ທ່ານເຂົ້າໄປເບິ່ງໃນເວບໄຊທ໌ການກວດຊຶ່ງທ່ານສາມາດຕື່ມຂໍ້ມູນຂອງທ່ານ.

ຖ້າທ່ານມີຄໍາຖາມ, ຈະມີພະນັກງານຢູ່ທີ່ນັ້ນຊ່ວຍເຫຼືອທ່ານ.

ຫຼັງຈາກທີ່ທ່ານໄດ້ໃຫ້ຂໍ້ມູນຂອງທ່ານແລ້ວ, ເວບໄຊທ໌ຈະພາທ່ານເຂົ້າໄປຫາແຕ່ລະຂັ້ນຕອນ ຂອງການກວດທາງນໍ້າລາຍ.

ທ່ານຈໍາເປັນຕ້ອງໄດ້ເອົານໍ້າລາຍໃຫ້ພຽງພໍ ພຽງແຕ່ໃສ່ເກີນເສັ້ນ.

ບໍ່ນັບຝອດ.

ການແຕະຫຼອດບັນຈຸ ຈະເຮັດໃຫ້ຝອດຫາຍໄປ ເພື່ອທີ່ທ່ານຈະສາມາດເບິ່ງໄດ້ວ່າທ່ານຈະຕ້ອງຕື່ມໃສ່ອີກເທົ່າໃດ.

ເມື່ອຫຼອດບັນຈຸເຕັມຮອດເສັ້ນ, ທ່ານຈະຖອດເອົາຈອຍອອກ ແລະ ປິດຝາ ດ້ວຍນ້ຳຢາກັນບູດສີຟ້າ.

ໃຫ້ບິດຝາໄປເລື້ອຍໆຈົນກວ່າກຽວທັນລະຫວ່າງ ນ້ຳຢາສີຟ້າ ແລະ ຕົວຢ່າງນ້ຳລາຍຂອງທ່ານຈະແຕກຕົວ ແລະ ທ່ານສາມາດສັ່ນຫຼອດໃຫ້ຢາສີຟ້າ ແລະ ນ້ຳລາຍຂອງທ່ານເຂົ້າກັນ.

ສັ່ນຫຼອດຕົວຢ່າງເປັນເວລາ 5 ວິນາທີ.

ສຸດທ້າຍ, ເອົາຫຼອດເກັບຕົວຢ່າງນ້ຳລາຍຂອງທ່ານໄວ້ເທິງໂຕະ ແລະ ຖິ້ມກ່ອງໃສ່ເຄື່ອງກວດລົງໃນຖັງຂີ້ເຫຍື້ອ.

ທ່ານຈະໄດ້ຮັບຜົນກວດຂອງທ່ານຜ່ານທາງອີເມວພາຍໃນເວລາ 48 ຊົ່ວໂມງ.

ຫຼື ຖ້າທ່ານບໍ່ມີອີເມວ, ທ່ານຈະໄດ້ຮັບການໂທແຈ້ງຕາມເບີໂທລະສັບທີ່ທ່ານໄດ້ເອົາໃຫ້.

ຖ້າທ່ານມີຄຳຖາມກ່ຽວກັບຂັ້ນຕອນການເກັບຕົວຢ່າງ, ໃຫ້ຖາມພະນັກງານທີ່ສະຖານທີ່ກວດນ້ຳລາຍ.

ຂອບໃຈ, ສຳລັບການເຂົ້າມາກວດ ແລະ ການຊ່ວຍໃຫ້ຊຸມຊົນຂອງພວກເຮົາມີຄວາມປອດໄພ!

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

11/9/20 (ພາສາອັງກິດ/Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ຈົ່ງໂທຫາ: 651-201-4989*